ASEAN AUSTRALIA SMART CITIES TRUST FUND
Asian Development Bank

Australian Government
Department of Foreign Affairs and Trade

ADB

ຄູ່ຮ່ວມຈັດຕັ້ງປະຕິບັດ: RAMBOLL



# ນະຄອນໄກສອນ ພົມວິຫານ

## ການປັບປຸງທັກສະຄວາມສາມາດໃນການຈ້າງງານ ແລະ ທັກສະທາງສັງຄົມໃນສະຖານທີ່ເຮັດວຽກທີ່ກຳລັງຂະຫຍາຍຕົວຜ່ານເຄື່ອງມືອັດສະລິຍະ

ຮູບພາບໂດຍ: ADB.

**ທີ່ນະຄອນໄກສອນ ພົມວິຫານ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ), ກອງທຶນຊ່ວຍເຫຼືອການພັດທະນາຕົວເມືອງອັດສະລິຍະອາຊຽນ-ອົດສະຕາລີ (AASCTF) ໄດ້ສະເໜີແນວຄວາມຄິດກ່ຽວກັບແພລດຟອມບໍລິການການຈ້າງງານ ແລະ ພັດທະນາແອັບພລິເຄຊັນໂທລະສັບມືຖືເພື່ອແກ້ບັນຫາຄວາມບໍ່ດຸ່ນດ່ຽງຂອງຄວາມຕ້ອງການ ທັກສະວິຊາຊີບ ແລະການສະໜອງທັກສະວິຊາຊີບທີ່ນະຄອນໄກສອນ ພົມວິຫານ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ສປປ ລາວ),. ກອງທຶນຊ່ວຍເຫຼືອ-ຊຶ່ງໄດ້ຮັບເງິນທຶນສະໜັບສະໜູນຈາກລັດຖະບານປະເທດອົດສະຕາລີ, ຊຸ້ມຄອງໂດຍ ທະນາຄາພັດທະນາອາຊີ (ADB) – ເພື່ອສະໜັບສະໜູນການສະແຫວງຫາໂອກາດໃນການຈ້າງງານທໃຫ້ດີຂຶ້ນຂອງຊາວໜຸ່ມໃນນະຄອນໄກສອນ ແລະ ເພື່ອໃຫ້ກາຍເປັນນະຄອນທີ່ມີການແຂ່ງຂັນ ແລະ ໜ້າຢູ່ຢ່າງອັດສະລິຍະ.**

### ນະຄອນໄກສອນ ພົມວິຫານ – ສູນກາງອຸດສາຫະກຳດ້ານຍຸດທະສາດແຫ່ງໃໝ່

ນະຄອນໄກສອນ ແມ່ນໜຶ່ງໃນສູນກາງຕົວເມືອງທີ່ມີການຂະຫຍາຍຕົວໄວທີ່ສຸດໃນ ສປປ ລາວ. ໃນຖານະເປັນນະຄອນຂອງແຂວງສະຫວັນນະເຂດ ຊຶ່ງເປັນແຂວງທີ່ມີເຂດເສດຖະກິດພິເສດແຫ່ງທຳອິດຂອງປະເທດ, ນະຄອນດັ່ງກ່າວນີ້ຈຶ່ງເປັນທຳເລທີ່ດີເລີດ ແລະ ເປັນສູນກາງທາງດ້ານການຄ້າສຳລັບນັກລົງທຶນ ທັງໃນລະດັບສາກົນ ແລະ ລະດັບທ້ອງຖິ່ນ. ແຕ່ບໍລິສັດຕ່າງໆໃນນະຄອນໄກສອນກຳລັງປະເຊີນກັບຄວາມຫຍຸ້ງຍາກໃນການວ່າຈ້າງ ແລະດຶງດູດຄວາມສົນໃຈພະນັກງານທີ່ມີຄຸນນະພາບມາເຮັດວຽກ. ບໍລິສັດຫຼາຍແຫ່ງໄດ້ລະບຸວ່າ ຕະຫຼາດແຮງງານມັກຈະຂາດແຄນແຮງງານທີ່ມີທັກສະທີ່ຈຳເປັນ ແລະ ມີຄວາມຮູ້ຈຳກັດກ່ຽວກັບຂັ້ນຕອນໃນການສະໝັກງານ, ສະພາບແວດລ້ອມໃນອຸດສະຫະກຳ ແລະ ມາລະຍາດໃນສະຖານທີ່ເຮັດວຽກ. AASCTF ໄດ້ຈັດຕັ້ງປະຕິບັດໂຄງການເປັນສອງໄລຍະ, ໂດຍການສະໜັບສະໜູນທາງດ້ານວິຊາການ ແລະ ດ້ານການເງິນແກ້ໄຂສິ່ງທ້າທາຍດັ່ງກ່າວນີ້ ເພື່ອສ້າງທ່າແຮງທາງດ້ານເສດຖະກິດຂອງນະຄອນ.

**ສະແກນລະຫັດສຳລັບລະບົບດິຈິຕອນ**

https://bit.ly/46kQv4F

### ການປະກອບສ່ວນສູ່ເປົ້າໝາຍການພັດທະນາແບບຍືນຍົງ

4 QUALITY EDUCATION

**ຮັບປະກັນການສຶກສາທີ່ມີຄຸນນະພາບຄອບຄຸມ ແລະ ເທົ່າທຽມ ແລະ ສົ່ງເສີມໂອກາດໃນການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນ** – ໂຄງການຊ່ວຍໃຫ້ຜູ້ຮຽນຈົບລະດັບອຸດົມນສຶກສາມີທັກສະທີ່ກ່ຽວຂ້ອງທີ່ຈຳເປັນສຳລັບການຈ້າງງານ ແລະ ມີຄວາມຮູ້ຫຼາຍຂຶ້ນກ່ຽວກັບການສະໝັກງານ, ການເຈລະຈາ ແລະ ຂັ້ນຕອນການກຽມຄວາມພ້ອມ. ນອກຈາກນີ້ຄູສອນຍັງໄດ້ຮັບການຝຶກອົບຮົມທີ່ກ່ຽວຂ້ອງກັບການປະສົມປະສານບັນດາທັກສະເຫຼົ່ານີ້.

8 DECENT WORK AND ECONOMIC GROWTH

**ສົ່ງເສີມການຂະຫຍາຍຕົວທາງດ້ານເສດຖະກິດທີ່ຍືນຍົງ, ຄົບຖ້ວນ ແລະ ການຈ້າງງານເຕັມຮູບແບບ ແລະ ມີປະສິດທິຜົນ ແລະ ວຽກງານທີ່ມີຄຸນຄ່າສຳລັບທຸກຄົນ** – ການສຶກສາຄວາມເປັນໄປໄດ້ລ່ວງໜ້າ ແລະ ການກະຕຸ້ນການສົ່ງເສີມການເຮັດວຽກທີ່ມີຄຸນຄ່າ ແລະ ການຈ້າງງານທີ່ມີປະສິດທິຜົນ ແລະ ນອກຈາກນີ້ຍັງສະໜັບສະໜູນໃຫ້ແກ່ນະຄອນໄກສອນໃນການບັນລຸການຂະຫຍາຍຕົວທາງດ້ານເສດຖະກິດ.

9 INDUSTRY, INNOVATION AND INFRASTRUCTURE

**ສ້າງພື້ນຖານໂຄງລ່າງທີ່ມີຄວາມຍືດຢຸ່ນ, ສົ່ງເສີມອຸດສາຫະກຳທີ່ຄອບຄຸມ ແລະ ຍືນຍົງ ແລະ ສົ່ງເສີມນະວັດຕະກຳ** – ການນຳໃຊ້ເຄື່ອງມືອັດສະລິຍະຊ່ວຍສົ່ງເສີມນະວັດຕະກຳ ແລະ ການບໍ່ແບ່ງແຍກ ເນື່ອງຈາກຊ່ວຍຮັບປະກັນວ່າສາມາດເຂົ້າເຖິງການຮຽນຮູ້ທາງອິນເຕີເນັດ ແລະ ແພລດຟອມການຮຽນຮູ້ອັດສະລິຍະທີ່ນຳສະເໜີໄດ້ ແລະ ມີສ່ວນຊ່ວຍໃນການພັດທະນາຊັບພະຍາກອນໃຫ້ດີຍິ່ງຂຶ້ນຊຶ່ງອຸດສາຫະກຳໃນນະຄອນຕ້ອງການ.

11 SUSTAINABLE CITIES AND COMMUNITIES

**ເຮັດໃຫ້ຕົວເມືອງຕ່າງໆ ແລະ ການຍົກຍ້າຍຖິ່ນຖານຂອງມະນຸດມີຄວາມຄອບຄຸມ,ປອດໄພ, ຍືດຢຸ່ນ ແລະ ຍືນຍົງ** – ເພີ່ມໂອກາດສຳລັບໂອກາດໃນການຈ້າງງານ ແລະ ສະໜັບສະໜູນການຂະຫຍາຍຕົວຂອງແຮງງານລຸ້ນໃໝ່ຊ່ວຍໃຫ້ເກີດການຂະຫຍາຍຕົວຂອງຕົວເມືອງທີ່ຍືນຍົງ ແລະ ຄອບຄຸມ.

## ໄລຍະທີ 1

### ກະກຽມການສຶກສາຄວາມເປັນໄປໄດ້ເພື່ອຍົກລະດັບແພລດຟອມບໍລິການຈ້າງງານດ້ວຍການຮຽນຮູ້ທາງອິນເຕີເນັດ

ນັບແຕ່ເດືອນຕຸລາ 2020 ເຖິງ ເດືອນພຶດສະພາ 2021, AASCTF ໄດ້ເຮັດວຽກຢ່າງໃກ້ຊິດກັບອໍານາດການປົກຄອງທ້ອງຖິ່ນ, ຜູ້ປະກອບການ, ສະຖາບັນການສຶກສາຊາວໜຸ່ມ ຜູ້ຊອກຫາງານ ເພື່ອສ້າງ ແລະເສີມສ້າງແພລດຟອມບໍລິການຈັດຫາງານດ້ວຍເຄື່ອງມື ໃຫ້ແທດເໝາະຫຼັກສູດຮຽນຮູ້ທາງອິນເຕີເນັດ. ໂຄງການນີ້ມີ 2 ວັດຖຸປະສົງຕົ້ນຕໍຄື: (i) ດໍາເນີນການປະເມີນຄວາມຕ້ອງການແພລດຟອມການບໍລິການຈ້າງງານ ແລະ ຫຼັກສູດການຮຽນຮູ້ທາງອິນເຕີເນັດ, ແລະ (ii) ວາງກອບແນວຄວາມຄິດເພື່ອສ້າງກິດຈະກໍາທົດລອງ ຊຶ່ງເປັນທ່າແຮງເພື່ອການກະຕຸ້ນການຈ້າງງານໃນອານາຄົດ.

ມີການຈັດກອງປະຊຸມ, ການສໍາພາດ, ແລະ ການສົນທະນາຕ່າງໆເພື່ອສ້າງຄວາມເຂົ້າໃຈການສະໜອງແຮງງານ (ຜູ້ຊອກຫາງານ) ແລະ ຄວາມຕ້ອງການແຮງງານ (ຂະແໜງການພາກເອກະຊົນ) ຢ່າງລະອຽດຖີ່ຖ້ວນ  ເພື່ອກໍານົດບັນດາປັດໄຈຕ່າງໆທີ່ປະກອບສ່ວນຫຼຸດຜ່ອນຊ່ອງວ່າງ(ຄວາມບໍ່ດຸ່ນດ່ຽງ) ດ້ານທັກສະວິຊາຊີບ. ຜ່ານການປຶກສາຫາລືກັບຫຼາຍພາກສ່ວນມ ການສາທິດ ເຮັດໃຫ້ເກີດການປະເມີນຂັ້ນພື້ນຖານ ແລະ ການສຶກສາຄວາມເປັນໄປ ສາມາດ ກໍານົດກິດຈະກໍາສໍາຄັນຂອງໂຄງການ ເຊັ່ນ ການກໍານົດກໍານົດໂຄງການນໍາທາງທີ່ມີທ່າແຮງ ຊຶ່ງເປັນແພລດຟອມການຮຽນຮູ້ ກ່ຽວກັບການສະໝັກງານ ແລະ ຂັ້ນຕອນໃນການກະກຽມຄວາມພ້ອມໃນການສະໝັກງານທາງອິນເຕີເນັດ ໂດຍສາມາດເຊື່ອມໂຍງກັບເວັບໄຊ ການບໍລິການແລະຊອກວຽກ.

## ໄລຍະທີ 2

### ພັດທະນາແອັບພລິເຄຊັນໃນໂທລະສັບມືຖື ແລະ ສະໜອງການຝຶກອົບຮົມເພື່ອປັບປຸງທັກສະດ້ານສັງຄົມເພື່ອການ ຈ້າງງານຂອງຊາວໜຸ່ມ

ພັດທະນາແອັບພລິເຄຊັນໃນໂທລະສັບມືຖື ແລະ ສະໜອງການຝຶກອົບຮົມເພື່ອປັບປຸງທັກສະດ້ານສັງຄົມເພື່ອການ ຈ້າງງານຂອງຊາວໜຸ່ມຜ່ານຈາກການສຶກສາຄວາມເປັນໄປໄດ້ລ່ວງໜ້າ, ADB (ພ້ອມການສະໜອງເງິນທຶນຈາກ AASCTF) ໄດ້ພັດທະນາຫຼັກສູດແລະເຄື່ອງມືຮຽນຮູ້ທັກສະດ້ານສັງຄົມທາງອິນເຕີເນັດ, ວິດີໂອ ແລະ ເຄື່ອວມືອື່ນໆ ເພື່ອແນະນໍາແນວທາງໃຫ້ແກ່ຜູ້ຮຽນຈົບການສຶກສາຫຼັງມັດທະຍົມ ແລະ ຊາວໜຸ່ມທີ່ຊອກຫາງານດັ່ງທີ່ບໍລິສັດຕ່າງໆໃນນະຄອນໄກສອນ ກໍານົດໄວ້. ໄລຍະທີ 2 ນີ້, ເລີ່ມຕົ້ນໃນເດືອນສິງຫາ 2022, ມີເປົ້າໝາຍຊ່ວຍຊາວໜຸ່ມພັດທະນາທັກສະສັງຄົມ ແລະຕຽມຄວາມພ້ອມປ່ຽນຈາກໂຮງຮຽນໄປສູ່ສະຖານທີ່ເຮັດວຽກ, ຕະຫຼອດຈົນເຖິງຊ່ວຍໃຫ້ນາຍຈ້າງສາມາດຈ້າງພະນັກງານທີ່ມີທັກສະຄວາມສາມາດເຂົ້າເຮັດວຽກນໍາອົງການ ຫຼືບໍລິສັດຂອງ.  ສື່ການຮຽນ-ການສອນທີ່ໄດ້ພັດທະນາຂຶ້ນແມ່ນສຸມໃສ່ທັກສະສັງຄົມທີ່ສໍາຄັນ4ວິຊາ: ວິທີກະກຽມສະໝັກງານ ແລະ ການສໍາພາດງານ ທັກສະການເຈລະຈາ, ທັກສະມະນຸດສໍາພັນແລະ ທັກສະການແກ້ໄຂບັນຫາ. ເນື້ອຫາທັງໝົດເປັນພາສາລາວ ແລະ ພາສາອັງກິດ ແລະ ລວມໄວ້ໃນແອັບໂທລະສັບມືຖືຊື່ວ່າ: Kaysone Self-Learning, ຊຶ່ງໄດ້ເປີດຕົວໃນເດືອນກໍລະກົດ 2023 ທີ່ນະຄອນໄກສອນ

ນອກຈາກນີ້ ຍັງມີການຈັດການຝຶກອົບຮົມໃຫ້ແກ່ຄູ ອາຈານ ຈາກ 3ແຫ່ງ (ມະຫາວິທະຍາໄລ ສະຫວັນນະເຂດແລະວິທະຍາໄລວິຊາຊີບ 2ແຫ່ງ) ເພື່ອສຶກສາ ແລະເຜີຍແຜ່ບັນດາທັກສະເຫຼົ່ານີ້ໃຫ້ນັກຮຽນຕົນເອງ. ໂຄງການຍັງຄົງຈັດຕັ້ງປະຕິບັດ ແລະ ມີແຜນຈະປະເມີນການນໍາໃຊ້ແອັບ ແລະ ລວບລວມຄໍາຕິຊົມຈາກຊາວໜຸ່ມ ແລະ ນາຍຈ້າງ.

### ຜະລິດຕະພັນຄວາມຮູ້

**ສະແກນລະຫັດເພື່ອດາວໂຫຼດເບິ່ງ ການສຶກສາຄວາມເປັນໄປໄດ້ລ່ວງໜ້າ**




### ດາວໂຫລດແອັບ

**ສະແກນເພື່ອດາວໂຫຼດ ຈາກ GOOGLE PLAY STORE ແລະ APPLE APP STORE**




### ຂໍ້ມູນກ່ຽວກັບກອງທຶນຊ່ວຍເຫຼືອການພັດທະນາຕົວເມືອງອັດສະລິຍະອາຊຽນ-ອົດສະຕາລີ

ກອງທຶນຊ່ວຍເຫຼືອການພັດທະນາຕົວເມືອງອັດສະລິຍະອາຊຽນ-ອົດສະຕາລີ (AASCTF) ໃຫ້ຄວາມຊ່ວຍເຫຼືອຕົວເມືອງຕ່າງໆໃນ ຂົງເຂດອາຊຽນເພື່ອເພີ່ມປະສິດທິພາບໃຫ້ແກ່ລະບົບການວາງແຜນການ, ການໃຫ້ບໍລິການ ແລະ ການບໍລິຫານດ້ານການເງິນ ໂດຍການພັດທະນາ ແລະ ທົດສອບ  ການແກ້ບັນຫາໃນຕົວເມືອງຢ່າງແທດເໝາະຜ່ານລະບົບດີຈີຕອນໄ ດ້ວຍການເຮັດວຽກຮ່ວມກັບຕົວເມືອງຕ່າງໆ, AASCTF ອໍານວຍຄວາມສະດວກການຫັນປ່ຽນໃຫ້ກາຍເປັນຕົວເມືອງທີ່ໜ້າຢູ່, ມີຄວາມຍືດຢຸ່ນ ແລະ ຄອບຄຸມຫຼາຍຂຶ້ນ, ໃນຂະນະດຽວກັນ ສາມາດກໍານົດຂັ້ນຕອນ ແລະແນວທາງການປະຕິບັດທີ່ດີທີ່ສຸດ ແລະ ສາມາດປັບຂະໜາດໄດ້ເພື່ອປະຕິບັດໃນຫຼາຍຕົວເມືອງໃນຂົງເຂດອາຊີ ແລະ ປາຊີຟິກ. ກອງທຶນຊ່ວຍເຫຼືອແມ່ນໄດ້ຮັບການສະໜັບສະໜູນທຶນຈາກລັດຖະບານປະເທດອົດສະຕາລີ ໂດຍຜ່ານທາງ ກະຊວງການຕ່າງປະເທດ ແລະ ການຄ້າ, ຊຶ່ງໄດ້ຮັບການຄຸ້ມຄອງໂດຍທະນາຄານ ພັດທະນາອາຊີ ແລະຈັດຕັ້ງປະຕິບັດໂດຍບໍລິສັດທີ່ປຶກສາແຮມໂບ.

in AASCTF | @aasctf | @AASCTF | X @aasctf